ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ລັດວິສາຫະກິດໄຟຟ້າລາວ

ເລກທີ: 3792/ຟຟລ.ທຟຟລ

ນະຄອນຫຼວງວຽງຈັນ, ວັນທີ: 10 SEP 2026

# ໜັງສືເຊີນເຂົ້າຮ່ວມປະມູນ

1. ລັດວິສາຫະກິດໄຟຟ້າລາວ ໄດ້ນຳໃຊ້ຮ່ວງເງິນແຜນງົບປະມານ ແລະ ການລົງທຶນ ປີ 2026 ເພື່ອດຳເນີນການປະມູນເປີດກວ້າງພາຍໃນ ຈັດຊື້ເຄື່ອງວັດແທກລະບົບສາຍດິນຂອງສາຍສົ່ງ 115KV, SONEL ລຸ້ນ MRU-200-GPS ເພື່ອຮັບໃຊ້ຫ້ອງການຄຸ້ມຄອງສາຍສົ່ງ ແລະ ສະຖານີໄຟຟ້າ ຂອງສາຂາແຂວງສະຫວັນນະເຂດ ທີ່ຂຶ້ນກັບ ຝ່າຍຄຸ້ມຄອງລະບົບໄຟຟ້າພາກໃຕ້. ໂດຍຂໍຖືເປັນກຽດເຊີນບັນດາຫ້າງຮ້ານ ຫຼື ບໍລິສັດທີ່ສົນໃຈ ແລະ ມີເງື່ອນໄຂເໝາະສົມ ເຂົ້າຮ່ວມປະມູນຈັດຊື້ໃນຄັ້ງນີ້, ຮັບປະກັນລາຄາຕາມທີ່ສະເໜີໃນປື້ມປະມູນ 90 ວັນ ຫຼັງເປີດຊອງປະມູນ, ໄລຍະສະໜອງ 60 ວັນ ແລະ ຮັບປະກັນຄຸນນະພາບໄລຍະ 01 ປີ.
2. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ: 30/ສພຊ, ລົງວັນທີ: 2 ພະຈິກ 2017. ແລະ ເອກະສານ ຄຳແນະນຳການໃຊ້ກົດໝາຍ ສະບັບ ເລກທີ: 0477/ກງ, ລົງວັນທີ: 13 ກຸມພາ 2019, ຄຳແນະນຳເພີ່ມເຕີມສຳລັບ ມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 1995/ກງ, ລົງວັນທີ: 24 ມິຖຸນາ 2019.
3. ຜູ້ປະມູນຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດດ້ານການສະໜອງອຸປະກອນໄຟຟ້າ ແລະ ໃບມອບພັນທະອາກອນປີ 2025 ທີ່ຖືກຕ້ອງຕາມກົດໝາຍ.
4. ບໍລິສັດໃດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນ ແລະ ເຮັດໜັງສືເຈດຈຳນົງຊື້ເອກະສານປະມູນ ໄດ້ທີ່ລັດວິສາຫະກິດໄຟຟ້າລາວ (ສຳນັກງານໃຫຍ່), ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ. ໂທ: (856-21) 316094-1614, ທີ່ຂາເຂົ້າຊັ້ນ 01 ຕຶກສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ ໃນໂມງລັດຖະການ, ເລີ່ມແຕ່ ວັນທີ: 15/09/2026 ຫາ ວັນທີ: ໒໐/10 /2026, ໃນລາຄາ 200,000 ກີບ/ຊອງ ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊຳລະຕ້ອງຈ່າຍເປັນເງິນສົດ).
5. ຊອງປະມູນຕ້ອງສົ່ງກ່ອນເວລາ 10 : 30ໂມງ ຂອງ ວັນທີ:໒໐/10/2026 ທີ່ຫ້ອງປະຊຸມຊັ້ນ 08, ຫ້ອງ 802, ສຳນັກງານໃຫຍ່. ຊອງປະມູນໃດສົ່ງຊ້າເກີນເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງໄດ້ເປີດໃນເວລາດຽວກັນໂດຍຊ້ອງໜ້າຄະນະກຳມະການຈັດຊື້ ລັດວິສາຫະກິດໄຟຟ້າລາວ, ຕາງໜ້າກະຊວງການເງິນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມ.
6. ຜູ້ປະມູນຕ້ອງມີເງິນຄ້ຳປະກັນຊອງປະມູນໃນອັດຕາ 2% ຂອງມູນຄ່າທີ່ສະເໜີໃນການປະມູນ (ເປັນໜັງສືຄ້ຳປະກັນຈາກທະນາຄານ ທີ່ນຳໃຊ້ເຖິງ ວັນທີ: 18/01/2027) ຫຼື ແຊັກວິຊາ).

ຜູ້ອຳນວຍການໃຫຍ່

ບໍລິສັດລັດ ລັດວິສາຫະກິດໄຟຟ້າລາວ ELECTRICITE DU LAOS

ບຸນທັນ ພັນໂດລັກ

ຮອງຜູ້ອຳນວຍການ